ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ທະນາຄານແຫ່ງ ສປປ ລາວ

ຫ້ອງການ

ເລກທີ: 02 /ຫກ

ນະຄອນຫຼວງວຽງຈັນ, ວັນທີ: 30 ມັງກອນ 2017

ສຳນັກງານ ຄຄຊ
ເລກທີ 0133
ລົງວັນທີ 01 FEB 2017
ໂທລະສັບ 021 217770

## ລາຍງານການເຄື່ອນໄຫວປະຈຳອາທິດ ທີ 9-13/01/2017 ແລະ ແຜນການເຄື່ອນໄຫວໃນອາທິດຕໍ່ໄປ ຂອງທະນາຄານແຫ່ງ ສປປ ລາວ

### I. ວຽກງານການເມືອງແນວຄິດ

ສະພາບການເມືອງແນວຄິດຂອງພະນັກງານພາຍໃນຂະແໜງທະນາຄານມີຄວາມສະຫງົບປົກກະຕິ, ພະນັກງານມີຄວາມອຸ່ນອ່ຽນທຸ່ນທ່ຽງ, ເຊື່ອໝັ້ນຕໍ່ການນຳພາຂອງພັກ-ລັດ, ມີສະຕິເຄົາລົບຕໍ່ການຈັດຕັ້ງ, ລະບຽບກົດໝາຍ ແລະ ຕັ້ງໜ້າປະຕິບັດໜ້າທີ່ວຽກງານຕາມທີ່ໄດ້ຮັບມອບໝາຍຢ່າງຕັ້ງໜ້າ, ມີຄວາມສາມັກຄີທັງພາຍໃນ ແລະ ພາຍນອກເປັນຢ່າງດີ.

### II. ການເຄື່ອນໄຫວວຽກງານວິຊາສະເພາະ

#### 1. ສະພາບເສດຖະກິດເງິນຕາສາກົນ

#### 1.1 ອັດຕາແລກປ່ຽນສາກົນ

ອັດຕາແລກປ່ຽນຢູ່ຕະຫຼາດສາກົນອາທິດນີ້ທຽບໃສ່ອາທິດຜ່ານມາເຫັນວ່າ: ເງິນໂດລາສະຫະລັດອ່ອນຄ່າ 0,43% ທຽບເງິນເອີໂຣ ພາຍຫຼັງທີ່ປະທານາທິບໍດີຂອງສະຫະລັດຄົນໃໝ່ ທ່ານ ໂດນັດ ທັມ ອອກຖະແຫຼງການຕໍ່ສື່ມວນຊົນເປັນຄັ້ງທຳອິດ, ຊຶ່ງການຖະແຫຼງການດັ່ງກ່າວ ບໍ່ໄດ້ເວົ້າກ່ຽວກັບການດຳເນີນມາດຕະການກະຕຸ້ນເສດຖະກິດແຕ່ຢ່າງໃດ.

| ສະກຸນເງິນຕ່າງໆທຽບກັບໂດລາ | ອາທິດຜ່ານມາ 2-6/01/2017 | ອາທິດນີ້ 9-13/01/2017 | ເປີເຊັນ ແຂງຄ່າ(+) / ອ່ອນຄ່າ(–) |
|---|---|---|---|
| ເອີໂຣ/ໂດລາ | 1,0598 | 1,0644 | -0,43% |
| ໂດລາ/ເຢນ | 115,96 | 114,63 | 1,16% |
| ໂດລາ/ບາດ | 35,680 | 35,400 | 0,79% |
| ໂດລາ/ເປໂຊ | 49,33 | 49,78 | -0,89% |
| ໂດລາ/ຣູເປີຍ | 13.360,00 | 13.323,00 | 0,28% |
| ໂດລາ/ໂດລາສິງກະໂປ | 1,4336 | 1,4271 | 0,46% |
| ໂດລາ/ຢວນ | 6,9244 | 6,8963 | 0,41% |

### 1.2 ສະພາບລາຄານ້ຳມັນ ແລະ ຄຳໃນຕະຫຼາດໂລກ

ລາຄານ້ຳມັນຫຼຸດລົງ 2% ເປັນ 52,88 ໂດລາ/ບາເຣວ ພາຍຫຼັງສະຖາບັນປິໂຕລ່ຽມຂອງສະຫະລັດ ໄດ້ລາຍງານຕົວເລກປະລິມານນ້ຳມັນດິບໃນຄັງນ້ຳມັນຂອງສະຫະລັດເພີ່ມຂຶ້ນ 1,5 ລ້ານບາເຣວ ມາຢູ່ທີ່ລະດັບ 484,3 ລ້ານບາເຣວ. ສ່ວນລາຄາຄຳເພີ່ມຂຶ້ນ 1,57% ເປັນ 1.196,81 ໂດລາ/ອອນ.

## 2. ສະພາບເສດຖະກິດເງິນຕາພາຍໃນ

### 2.1 ສະພາບອັດຕາແລກປ່ຽນພາຍໃນ

ສະພາບອັດຕາແລກປ່ຽນອາທິດນີ້ທຽບໃສ່ອາທິດຜ່ານມາ ເຫັນວ່າເງິນກີບທຽບໃສ່ເງິນໂດລາອ່ອນຄ່າລົງ 0,13% ທຽບໃສ່ສະກຸນເງິນໂດລາ ແລະ ອ່ອນຄ່າລົງ 1,00% ເມື່ອທຽບໃສ່ສະກຸນເງິນບາດ. ທຽບໃສ່ທ້າຍປີຜ່ານມາເຫັນວ່າ ເງິນກີບອ່ອນຄ່າລົງ 1,90% ທຽບໃສ່ສະກຸນເງິນໂດລາ ແລະ ອ່ອນຄ່າ 3,40% ທຽບໃສ່ສະກຸນເງິນບາດ.

| ອັດຕາ | ອາທິດຜ່ານມາ 2-6/01/2016 | | | ອາທິດນີ້ 9-13/01/2017 | | | % ທຽບອາທິດຜ່ານມາ | | | ທຽບທ້າຍປີຜ່ານມາ | | |
|---|---|---|---|---|---|---|---|---|---|---|---|---|
| | ຊື້ | ຂາຍ | ສະເລັ່ຍ | ຊື້ | ຂາຍ | ສະເລັ່ຍ | ຊື້ | ຂາຍ | ສະເລັ່ຍ | ຊື້ | ຂາຍ | ສະເລັ່ຍ |
| ອັດຕາທະຄານ[1] | | | | | | | | | | | | |
| ໂດລາ | 8.302,40 | 8.351,50 | 8.324,35 | 8.312,82 | 8.359,25 | 8.335,58 | -0,13% | -0,09% | -0,13% | -1,94% | -1,81% | -1,90% |
| ບາດ | 232,87 | 234,77 | 234,27 | 235,53 | 237,49 | 236,64 | -1,13% | -1,14% | -1,00% | -3,34% | -3,59% | -3,40% |

### 2.2 ສະພາບຖານເງິນຕາ ແລະ ປະລິມານເງິນ M2

- ຖານເງິນຕາປະຈຳອາທິດນີ້ ຫຼຸດລົງ 1,87% ເມື່ອທຽບໃສ່ອາທິດຜ່ານມາ, ຖ້າທຽບໃສ່ໄລຍະດຽວກັນຂອງປີຜ່ານມາ ເພີ່ມຂຶ້ນ 0,86%;
- ປະລິມານເງິນ M2 ເພີ່ມຂຶ້ນ 0,22% ເມື່ອທຽບໃສ່ອາທິດຜ່ານມາ, ຖ້າທຽບໃສ່ໄລຍະດຽວກັນຂອງປີຜ່ານມາ ເພີ່ມຂຶ້ນ 14,28%.

### 2.3 ການຊື້-ຂາຍເງິນຕາ (ເງິນໂດລາ ແລະ ເງິນບາດ) ຂອງທີ່ວລະບົບທະນາຄານທຸລະກິດ

- ການຊື້-ຂາຍເງິນຕາຕ່າງປະເທດ (ເງິນໂດລາ ແລະ ເງິນບາດ) ຂອງບັນດາທະນາຄານທຸລະກິດກັບລູກຄ້າພາຍໃນປະຈຳອາທິດ (06-12/01/2017) ເຫັນວ່າ ທທກ ຊື້-ຂາຍໂດລາສຸດທິ 47,20 ລ້ານໂດລາ (ໃນນີ້ ຊື້ໂດລາໄດ້ 69,90 ລ້ານໂດລາ ແລະ ຂາຍໂດລາໄດ້ 22,70 ລ້ານໂດລາ) ແລະ ຂາຍເງິນບາດສຸດທິ 1.091,73 ລ້ານບາດ (ໃນນີ້ ຊື້ບາດໄດ້ 207,41 ລ້ານບາດ ແລະ ຂາຍບາດໄດ້ 1.299,14 ລ້ານບາດ); ມູນຄ່າການຊື້-ຂາຍເງິນໂດລາ ແລະ ເງິນບາດເມື່ອທຽບໃສ່ອາທິດຜ່ານມາເຫັນວ່າ ເງິນໂດລາເພີ່ມຂຶ້ນ 125,80% ແລະ ເພີ່ມຂຶ້ນ 52,35% ສຳລັບເງິນບາດ.
- ການຊື້-ຂາຍລະຫວ່າງ ທຫລ ກັບ ທທກ ເຫັນວ່າ: ທຫລ ຂາຍເງິນໂດລາສຸດທິ ຈຳນວນ 8,66 ລ້ານໂດລາ ແລະ ຂາຍເງິນບາດ 26 ລ້ານບາດ;
- ການຊື້-ຂາຍລະຫວ່າງທະນາຄານທຸລະກິດດ້ວຍກັນເຫັນວ່າ: ປະລິມານການຊື້-ຂາຍເງິນໂດລາມີຈຳນວນ 2,75 ລ້ານໂດລາສະຫະລັດ ແລະ ເງິນບາດ 9,70 ລ້ານບາດ;
- ການຊື້-ຂາຍລະຫວ່າງ ທຫລ ກັບ ພາກສ່ວນອື່ນໆ ເຫັນວ່າ: ພາຍໃນອາທິດແມ່ນບໍ່ມີການຊື້-ຂາຍ.

[1] %ການປ່ຽນແປງຂອງອັດຕາແລກປ່ຽນ ໃນອັດຕາຂອງ ທທກ ແມ່ນໄດ້ຈາກອັດຕາສະເລ່ຍຖ່ວງນ້ຳໜັກ;

## ສະພາບການ ຊື້-ຂາຍເງິນຕາຕ່າງປະເທດ

(ຫົວໜ່ວຍ: ລ້ານ)

| | ອາທິດທີຜ່ານມາ 30/12/2016-05/1/2017 | | ອາທິດທີ 6-12/1/2017 | | (%) +ເພີ່ມຂຶ້ນ /-ຫຼຸດລົງ | |
|---|---|---|---|---|---|---|
| | ໂດລາ | ບາດ | ໂດລາ | ບາດ | ໂດລາ | ບາດ |
| **1. ການຊື້ເງິນຕາຕ່າງປະເທດ** | **29,18** | **163,60** | **69,90** | **207,41** | **139,55%** | **26,78%** |
| - ທ/ຄທຸລະກິດລັດ | 2,36 | 11,08 | 7,88 | 69,80 | 233,90% | 529,96% |
| - ທ/ຄທຸລະກິດອື່ນໆ | 26,82 | 152,52 | 62,02 | 137,61 | 131,25% | -9,78% |
| **2. ການຂາຍເງິນຕາຕ່າງປະເທດ** | **11,83** | **825,26** | **22,70** | **1.299,14** | **91,89%** | **57,42%** |
| - ທ/ຄທຸລະກິດລັດ | 1,36 | 61,62 | 14,01 | 91,06 | 930,15% | 47,78% |
| - ທ/ຄທຸລະກິດອື່ນໆ | 10,47 | 763,64 | 8,69 | 1.208,08 | -17,00% | 58,20% |
| **ຊື້-ຂາຍສຸດທິ ທທກ** | **17,35** | **-661,66** | **47,20** | **-1.091,73** | **172,05%** | **65,00%** |
| - ຜົດດ່ຽງ ຊື້-ຂາຍ | 59,46% | -404,4% | 67,53% | -526,36% | 13,57% | 30,15% |
| - ມູນຄ່າການຊື້-ຂາຍ | **41,01** | **988,86** | **92,60** | **1.506,55** | **125,80%** | **52,35%** |
| **3. ການຊື້-ຂາຍລະຫວ່າງ ທຫລ ກັບ ທທກ** | **4,55** | **0,00** | **-8,66** | **-26,00** | | |
| - ທຫລ ຊື້ຈາກ ທທກ | 6,15 | 0,00 | 0,00 | 0,00 | | |
| - ທຫລ ຂາຍໃຫ້ ທທກ | 1,60 | 0,00 | 8,66 | 26,00 | | |
| **4. ຊື້-ຂາຍ ລະຫວ່າງ ທທກ ດ້ວຍກັນ** | **0,70** | **30,00** | **2,75** | **9,70** | | |
| **5. ທຫລ ກັບ ພາກສ່ວນ ອື່ນໆ** | **0,06** | **0,00** | **0,00** | **0,00** | | |
| -ທຫລ ຊື້ຈາກ ພາກສ່ວນອື່ນໆ | 0,06 | 0,00 | 0,00 | 0,00 | | |
| -ທຫລ ຂາຍໃຫ້ພາກສ່ວນອື່ນໆ | 0,00 | 0,00 | 0,00 | 0,00 | | |

### 2.4 ສະພາບອັດຕາເງິນເຟີ້

ອັດຕາເງິນເຟີ້ ໃນເດືອນ 01/2017 ຄາດວ່າຈະເພີ່ມຂຶ້ນຢູ່ໃນລະດັບ 2,84% (ຕົວເລກຄາດຄະເນ) ຈາກ 2,09% ໃນເດືອນ 12/2016.

### 2.5 ການຄຸ້ມຄອງເງິນຕາຕ່າງປະເທດ ແລະ ການສົ່ງເສີມນຳໃຊ້ເງິນກີບ

ທະນາຄານແຫ່ງ ສປປ ລາວ ໄດ້ອະນຸຍາດໃຫ້ທະນາຄານທຸລະກິດນຳເງິນຕາຕ່າງປະເທດອອກນອກ ສປປ ລາວ ຈຳນວນ 34,72 ລ້ານໂດລາສະຫະລັດທຽບເທົ່າ, ຫຼຸດລົງ 49,9% ທຽບໃສ່ອາທິດຜ່ານມາ.

## 3. ສະພາບການເຄື່ອນໄຫວຊຳລະສະສາງຜ່ານທະນາຄານແຫ່ງ ສປປ ລາວ

ແຊັກເຄື່ອນໄຫວຜ່ານສູນຊຳລະສະສາງຂອງ ທຫລ ໃນອາທິດນີ້ ຈຳນວນ 603 ສະບັບ ທຽບໃສ່ອາທິດຜ່ານມາເພີ່ມຂຶ້ນ 138 ສະບັບ ເທົ່າກັບ 29,67% ລວມຈຳນວນເງິນທີ່ໂອນຜ່ານທັງໝົດ 474,55 ຕື້ກີບ ເພີ່ມຂຶ້ນ 259,28 ຕື້ກີບ ເທົ່າກັບ 120,44% ເມື່ອທຽບໃສ່ອາທິດຜ່ານມາ;

ການໂອນເງິນຜ່ານລະບົບຊຳລະສະສາງແບບມູນຄ່າສູງ (RTGS) ລະຫວ່າງວັນທີ (6-12/01/2017) ມີຈຳນວນ 2.035 ຄັ້ງ ລວມມູນຄ່າໃນໂອນທັງໝົດ 391,35 ຕື້ກີບ ທຽບໃສ່ອາທິດຜ່ານມາເພີ່ມຂຶ້ນ 38,52 ຕື້ກີບ ເທົ່າກັບ 10,91%;

**ກະຊວງການເງິນ:** ພາຍໃນອາທິດນີ້ແມ່ນບໍ່ມີການເຄື່ອນໄຫວ.

## 4. ສະພາບການຊື້-ຂາຍຫຼັກຊັບໃນຕະຫຼາດຫຼັກຊັບລາວ.

ດັດຊະນີຕະຫຼາດຫຼັກຊັບລາວ ໃນອາທິດນີ້ ປິດຢູ່ທີ່ 1.119,73 ຈຸດ ຫຼຸດລົງ 2% ເມື່ອທຽບໃສ່ອາທິດຜ່ານມາ, ຕະຫຼອດອາທິດ ມີປະລິມານຊື້-ຂາຍຮຸ້ນທັງໝົດ 207.600 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 945,21 ລ້ານກີບ ເພີ່ມຂຶ້ນ 41,29% ທຽບໃສ່ອາທິດຜ່ານມາ. ໂດຍອາທິດນີ້ ມີຜູ້ລົງທຶນຕ່າງປະເທດຊື້-ຂາຍສະເລ່ຍ ກວມເອົາ 66,45% ຂອງມູນຄ່າການຊື້-ຂາຍທັງໝົດ.

| ຊື່ | ດັດຊະນີອາທິດທີ (2-6/1/2017) | ດັດຊະນີອາທິດທີ (9-13/1/2017) | (ເພີ່ມຂຶ້ນ+)/(ຫຼຸດລົງ-) | ໝາຍເຫດ |
|---|---|---|---|---|
| ດັດຊະນີຕະຫຼາດຫຼັກຊັບລາວ | 1.142,56 | 1.119,73 | 2% | |

### ສະພາບການຊື້-ຂາຍຮຸ້ນຂອງຕະຫຼາດຫຼັກຊັບລາວ (LSX)

(ຫົວໜ່ວຍມູນຄ່າ 1.000ກີບ)

| ລາຍຊື່ | ອາທິດກ່ອນ | | | ອາທິດນີ້ | | | %ປ່ຽນແປງ | | |
|---|---|---|---|---|---|---|---|---|---|
| | ຈຳນວນ(ຮຸ້ນ) | ມູນຄ່າການຊື້-ຂາຍ (ກີບ) | ລາຄາ ສະເລ່ຍ (ກີບ) | ຈຳນວນ (ຮຸ້ນ) | ມູນຄ່າການຊື້-ຂາຍ (ກີບ) | ລາຄາ ສະເລ່ຍ (ກີບ) | ຈຳນວນ (ຮຸ້ນ) | ມູນຄ່າການ ຊື້-ຂາຍ (ກີບ) | ລາຄາ ສະເລ່ຍ (ກີບ) |
| ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ | 54.100 | 324.000.000 | 5.989 | 55.700 | 337.400.000 | 6.057 | 2,96 | 4,14 | 69 |
| ບໍລິສັດຜະລິດໄຟຟ້າລາວ ມະຫາຊົນ | 51.700 | 276.060.000 | 5.340 | 66.600 | 388.770.000 | 5.837 | 28,82 | 40,83 | 498 |
| ບໍລິສັດລາວເວີນ ມະຫາຊົນ | 0 | 0 | 5.900 | 2.300 | 13.340.000 | 5.800 | - | - | -100 |
| ບໍລິສັດປີໂຕລຽມເທຣດ ດິ້ງລາວ ມະຫາຊົນ | 23.400 | 57.330.000 | 2.450 | 82.800 | 205.125.000 | 2.477 | 253,85 | 257,80 | 27 |
| ບໍລິສັດສູວັນນີໂຮມເຊັນເຕີ ມະຫາຊົນ | 4.300 | 11.610.000 | 2.700 | 200 | 575.000 | 2.875 | -95 | -95 | 175 |
| ທັງໝົດ | 133.500 | 669.000.000 | 0 | **207.600** | **945.210.000** | | 55,51 | 41,29 | |

## 3. ວຽກງານອື່ນໆ ທີ່ພົ້ນເດັ່ນ.

- ສຳເລັດການຈັດກອງປະຊຸມ: ❶ ກອງປະຊຸມສ່ອງແສງສາຍພັກ-ສາຍລັດ ປະຈຳເດືອນ ທັນວາ 2016, ❷ ກອງປະຊຸມແລກປ່ຽນບົດຮຽນວຽກງານຄຸ້ມຄອງສະຖາບັນການເງິນປະຈຳປີ ຢູ່ແຂວງຊຽງຂວາງ ແລະ ແຂວງ ອຸດົມໄຊ, ❸ ກອງປະຊຸມປຶກສາຫາລື ກ່ຽວກັບການປະເມີນພະນັກງານ ທຫລ ປະຈຳປີ 2016, ❹ ກອງປະຊຸມປຶກສາຫາລືກ່ຽວກັບການປະເມີນຄວາມສ່ຽງລະດັບຊາດວຽກງານສະກັດກັ້ນຕ້ານການຟອກເງິນ, ❺ ກອງປະຊຸມສຳມະນາ ກ່ຽວກັບການພັດທະນາລາຍງານຂໍ້ມູນສິນເຊື່ອ CIB, ❻ ກອງປະຊຸມຄົ້ນຄວ້າກ່ຽວກັບການຮ່າງດຳລັດ ວຽກງານຂໍ້ມູນຂ່າວສານສິນເຊື່ອ CIB;
- ສຳເລັດການເຂົ້າຮ່ວມກອງປະຊຸມເປີດກວ້າງວຽກງານກວດສອບ ປະຈຳປີ 2016;
- ຮັບຕ້ອນການເຂົ້າຢ້ຽມຂໍ່ານັບຄະນະນຳຂອງ ທຫລ ຈາກພາກສ່ວນຕ່າງໆຄື: ທ່ານ ຜູ້ບໍລິຫານງານຄົນໃໝ່ຂອງທະນາຄານລາວ-ຝຣັ່ງ, ຄະນະຊ່ຽວຊານຈາກທະນາຄານໂລກ ທີ່ມາເຮັດວຽກການປະເມີນຄວາມສ່ຽງລະດັບຊາດ.

## III. ແຜນວຽກຈຸດສຸມອາທິດຕໍ່ໄປ:

ສືບຕໍ່ດຳເນີນນະໂຍບາຍເງິນຕາ ແລະ ອັດຕາແລກປ່ຽນ ດັ່ງທີ່ໄດ້ກຳນົດໄວ້ໃນແຜນວຽກປະຈຳປີ ເພື່ອຮັກສາສະຖຽນລະພາບເງິນຕາແຫ່ງຊາດໃຫ້ມີຄວາມໝັ້ນທ່ຽງ; ສືບຕໍ່ຕິດຕາມຢ່າງເປັນປົກກະຕິໂດຍສະເພາະຕະຫຼາດເປີດ, ອັດຕາດອກເບ້ຍ ແລະ ອັດຕາແລກປ່ຽນລະຫວ່າງທະນາຄານ, ພ້ອມທັງໄດ້ສຸມໃສ່ວຽກງານໃນຕໍ່ໜ້າດັ່ງນີ້:

- ສືບຕໍ່ສຶກສາຄົ້ນຄວ້າເນື້ອໃນຂອງຫຼັກການ ບາເຊວ 2 ວິທີປະຕິບັດ ແລະ ບົດຮຽນຂອງສາກົນ ເພື່ອເປັນແນວທາງໃນການຄົ້ນຄວ້າ ແລະ ຈັດຕັ້ງປະຕິບັດ;
- ເຂົ້າຮ່ວມກອງປະຊຸມຕ່າງໆ: ❶ ເຂົ້າຮ່ວມກອງປະຊຸມຄະນະເສດຖະກິດມະຫາພາກ ທີ່ (ຫສນຍ), ❷ ກອງປະຊຸມວຽກງານກວດກາທົ່ວປະເທດ ປະຈຳປີ 2016 ທີ່ (ຄະນະໂຄສະນາກວດກາສູນກາງພັກ), ❸ ກອງປະຊຸມພົບປະລະຫວ່າງພາກລັດ ແລະ ຜູ້ປະກອບການດ້ານກະສິກຳ ທີ່ (ແຂວງ ສະຫວັນນະເຂດ);
- ກະກຽມຈັດກອງປະຊຸມເຜີຍແຜ່ເອກະສານສຳຄັນຕ່າງໆຂອງຊາດ, ຈັດພິທີຈັດພິທີຍ້ອງຍໍ ແລະ ຊົມເຊີຍປະຈຳປີ 2014-2015, ຈັດພິທີມອບຮັບໃບຍ້ອງຍໍພະນັກງານທີ່ໄດ້ປະກອບສ່ວນໃນກອງປະຊຸມຂັ້ນສູງຂອງວຽກງານການເງິນ-ທະນາຄານກາງອາຊຽນ;
- ກະກຽມຕ້ອນຮັບການເຂົ້າຢ້ຽມຂໍ່ານັບຂອງ ປະທານໃຫຍ່ ກຸ່ມບໍລິສັດມາຣູຮານ ຈາກປະເທດ ຍີ່ປຸ່ນ.

ຫົວໜ້າຫ້ອງການທະນາຄານແຫ່ງ ສປປ ລາວ

ຫ້ອງການ

ເພັດສະຖາພອນ ແກ້ວວົງວິຈິດ